ປະທານປະເທດ

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນະຄອນຫຼວງວຽງຈັນ, ວັນທີ 05 ຕຸລາ 2023

ພະນະທ່ານ,

ຂ້າພະເຈົ້າ ມີຄວາມເສົ້າສະຫຼົດໃຈຢ່າງສຸດຊຶ້ງ ເມື່ອໄດ້ຮູ້ຂ່າວວ່າ ພະນະທ່ານ ຈໍຈີໂອ ນາໂປລີຕາໂນ, ອະດີດ ປະທານາທິບໍດີ ແຫ່ງ ສາທາລະນະລັດ ອີຕາລີ ຜູ້ນຳທີ່ແສນເຄົາລົບຮັກ ຂອງ ປະຊາຊົນ ອີຕາລີ ໄດ້ເສຍຊີວິດ ໃນວັນທີ 22 ກັນຍາ 2023 ຜ່ານມາ.

ພະນະທ່ານ ຈໍຈີໂອ ນາໂປລີຕາໂນ ໄດ້ອຸທິດຕົນເຂົ້າໃນການສ້າງສາພັດທະນາປະເທດ ອີຕາລີ ໃນຕະຫຼອດໄລຍະຫຼາຍປີທີ່ຜ່ານມາ. ການຈາກໄປຂອງ ພະນະທ່ານ ຈໍຈີໂອ ນາໂປລີຕາໂນ ຖືເປັນການສູນເສຍອັນໃຫຍ່ຫຼວງ ສຳລັບ ຄອບຄົວ ນາໂປລີຕາໂນ ຕະຫຼອດເຖິງ ປະຊາຊົນ ອີຕາລີ ທຸກຖ້ວນໜ້າ.

ຕາງໜ້າໃຫ້ ປະຊາຊົນ ລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງຄວາມເສົ້າສະຫຼົດໃຈຢ່າງສຸດຊຶ້ງ ແລະ ຂໍແບ່ງເບົາຄວາມທຸກໂສກ ມາຍັງ ພະນະທ່ານ ແລະ ຜ່ານພະນະທ່ານ ໄປຍັງ ສະມາຊິກ ຄອບຄົວ ນາໂປລີຕາໂນ ລວມທັງ ປະຊາຊົນ ອີຕາລີ ເພື່ອນມິດທຸກຖ້ວນໜ້າ ມານະໂອກາດນີ້ດ້ວຍ.

ຂໍໃຫ້ດວງວິນຍານ ຂອງ ພະນະທ່ານ ຈໍຈີໂອ ນາໂປລີຕາໂນ ຈົ່ງໄປສູ່ສຸຄະຕິ.

ທອງລຸນ ສີສຸລິດ

ພະນະທ່ານ ແຊກຈີໂອ ມັດຕາເຣນລາ

ປະທານາທິບໍດີ ແຫ່ງ ສາທາລະນະລັດ ອີຕາລີ

ທີ່ ໂຣມ